**26. ຊ່ອງທາງໃນການສົ່ງຄໍາສັ່ງຊື້-ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບລາວ**

ຊ່ອງທາງໃນການສົ່ງຄໍາສັ່ງຊື້-ຂາຍຮຸ້ນ ຢູ່ຕະຫຼາດຫຼັກຊັບລາວ ປະກອບມີ 4 ຊ່ອງທາງ ຄື:

- **ສົ່ງຄໍາສັ່ງຜ່ານພະນັກງານໂດຍກົງ**: ຜູ້ລົງທຶນສາມາດສົ່ງຄໍາສັ່ງຊື້-ຂາຍຮຸ້ນຜ່ານນາຍໜ້າຊື້-ຂາຍຮຸ້ນໂດຍກົງທີ່ຈຸດບໍລິການຂອງບໍລິສັດຫຼັກຊັບ;
- **ສົ່ງຄໍາສັ່ງຜ່ານທາງໂທລະສັບ:** ຜູ້ລົງທຶນສາມາດສົ່ງຄໍາສັ່ງຊື້-ຂາຍຮຸ້ນຜ່ານທາງໂທລະສັບຂອງບໍລິສັດຫຼັກຊັບທີ່ທ່ານໃຊ້ບໍລິການ;
- **ສົ່ງຄໍາສັ່ງຜ່ານທາງ ອີເມລ໌:** ຜູ້ລົງທຶນສາມາດສົ່ງຄໍາສັ່ງຊື້-ຂາຍຮຸ້ນຜ່ານທາງ ອີເມລ໌ ຂອງນາຍໜ້າຊື້-ຂາຍຮຸ້ນທີ່ທ່ານໃຊ້ບໍລິການ;
- **ສົ່ງຄໍາສັ່ງຜ່ານທາງ "ລະບົບຊື້-ຂາຍກັບທີ່ (Home Trading System, HTS)":** ຜູ້ລົງທຶນຕ້ອງລົງທະບຽນນໍາໃຊ້ HTS ທີ່ຈຸດບໍລິການ. ຫຼັງຈາກຕິດຕັ້ງລະບົບໃສ່ຄອມພິວເຕີສ່ວນຕົວ ຫຼື Note book ຜູ້ລົງທຶນກໍ່ຈະສາມາດສົ່ງຄໍາສັ່ງຊື້-ຂາຍຮຸ້ນໄດ້ດ້ວຍຕົວເອງທັນທີ.